ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ທຄຕລ ຈັບມືກັບກຸ່ມບໍລິສັດ ຢຸນນານ ບໍລິການຮັບເງິນສົດຕາມຈຸດສະຖານີທາງດ່ວນວຽງຈັນ-ວັງວຽງ




ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ແລະ ກຸ່ມບໍລິສັດ ຢຸນນານ ກໍ່ສ້າງ-ລົງທຶນ ແລະ ຖືຮຸ້ນຈຳກັດໄດ້ຈັດພິທີເຊັນສັນຍາກ່ຽວກັບການບໍລິການຮັບເງິນສົດຕາມຈຸດສະຖານີທາງດ່ວນວຽງຈັນ-ວັງວຽງ ໃນວັນທີ 27 ພະຈິກ 2020 ທີ່ໂຮງແຮມເມືອງແທ່ງ ນະຄອນຫຼວງວຽງຈັນໂດຍການໃຫ້ກຽດເຂົ້າເປັນສັກຂີພະຍານຂອງທ່ານ ບຸນເຫຼືອ ສິນໄຊ ວໍຣະວົງ ຮອງລັດຖະມົນຕີ ກະຊວງການເງິນ, ປະທານສະພາບໍລິຫານ ທຄຕລ; ຕາງໜ້າຈາກທະນາຄານແຫ່ງ ສປປ ລາວ, ຕາງໜ້າກະຊວງໂຍທາທິການ ແລະ ຂົນສົ່ງ, ຄະນະອຳນວຍການ ທຄຕລ-ຄະນະອຳນວຍການ ICBC ແລະ ພາກສ່ວນກ່ຽວຂ້ອງຂອງທັງ 2 ຝ່າຍ ເຂົ້າຮ່ວມ.

ໃນພິທີເຊັນສັນຍາ; ຕາງໜ້າໃຫ້ ທຄຕລ ໂດຍແມ່ນທ່ານ ພູຂົງ ຈັນທະຈັກ ຜູ້ອຳນວຍການໃຫຍ່ ທຄຕລ ແລະ ທ່ານ ຢົງຄົ້ວ ປະທານບໍລິສັດ ຮ່ວມທຶນພັດທະນາທາງດ່ວນ ລາວ-ຈີນ ຈຳກັດ ໂດຍລະບຸວ່າ: ທາງດ່ວນວຽງຈັນ-ວັງວຽງ ເປັນໂຄງການກໍ່ສ້າງທາງດ່ວນໄລຍະທີ 1 ມີຄວາມຍາວ 109 ກິໂລແມັດ ນັບແຕ່ເມືອງນາຊາຍທອງ ນະຄອນຫຼວງວຽງຈັນ ຫາເມືອງວັງວຽງ ແຂວງວຽງຈັນ, ກວ້າງ 23 ແມັດ, ມີ 4 ຊ່ອງທາງຈໍລະຈອນ, ມີ 2 ແລວ ໄປ-ກັບ, ມີອຸໂມງ 1 ແຫ່ງ ຢູ່ເຂດພູພະ, ມີຂົວຂ້າມທັງໝົດ 34 ແຫ່ງ ປະກອບດ້ວຍຂົວຂ້າມທາງເລກທີ 13 ເໜືອ 3 ຈຸດ, ຂ້າມທາງລົດໄຟ 4 ຈຸດ ແລະ ຂ້າມທາງເຂົ້າບ້ານທົ່ວໄປ 23 ຈຸດ ແລະ ຈຸດເຊື່ອມຕໍ່ເຂົ້າ-ອອກມີ 7 ຈຸດ ຄື: ບ້ານສີເກີດ, ບ້ານນາຊອນ, ບ້ານບົວ, ບ້ານສະກ້າ, ບ້ານໂພນໂຮງ, ບ້ານຫີນເຫີບ ແລະ ວັງວຽງ.

ໂຄງການທາງດ່ວນນະຄອນຫຼວງວຽງຈັນ-ວັງວຽງ ເປັນໂຄງການຮ່ວມມືທີ່ສຳຄັນເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງການພັດທະນາເສດຖະກິດ ແລະ ພື້ນຖານໂຄງລ່າງຂອງ ສປປ ລາວ. ໃນນີ້, ທຄຕລ ໄດ້ມີສ່ວນຮ່ວມໃນການສະໜອງບໍລິການໃນໂຄງການດັ່ງກ່າວໃຫ້ແກ່ບໍລິສັດຮ່ວມທຶນພັດທະນາທາງດ່ວນລາວ-ຈີນ ຈຳກັດ ໂຄງການທາງດ່ວນນະຄອນຫຼວງວຽງຈັນ-ວັງວຽງ ຖືເປັນ

ເສັ້ນທາງດ່ວນທຳອິດທີ່ຈະເປີດນຳໃຊ້ໃນ ສປປ ລາວ, ເປັນບາດກ້າວໜຶ່ງທີ່ສຳຄັນໃນການພັດທະນາປະເທດຊາດ ແລະ ເປັນວຽກງານທີ່ສຳຄັນຂອງ ທຄຕລ ໃນການໃຫ້ບໍລິການ ເພື່ອອຳນວຍຄວາມສະດວກໃຫ້ແກ່ການຊຳລະຄ່າຜ່ານທາງດ່ວນຂອງປະຊາຊົນຜູ້ຊົມໃຊ້, ຮັບປະກັນການເກັບກຳຄ່າຜ່ານທາງໃຫ້ແກ່ເຈົ້າຂອງໂຄງການຢ່າງຄົບຖ້ວນ ແລະ ໂປ່ງໃສ ໂດຍ ທຄຕລ ຈະສືບຕໍ່ພັດທະນາລະບົບການບໍລິການໃຫ້ມີຄວາມທັນສະ ໄໝ ແລະ ສືບຕໍ່ຮ່ວມມືກັບພາກສ່ວນອື່ນໆເພື່ອອຳນວຍຄວາມສະດວກໃນການຊຳລະສະສາງຕ່າງໆຂອງລູກຄ້າຜ່ານ ທຄຕລ ດ້ວຍເຄື່ອງມືທີ່ທັນສະໄໝ ຫຼື ໃນຍຸກແຫ່ງການບໍລິການທະນາຄານແບບດິຈິຕໍ ຫຼື ຍຸກ 4.0.

**# ຂ່າວ-ພາບ: ຮັດສະໝີ ດວງສັດຈະ**

**ຮັກບ້ານເກີດເມືອງນອນ ໃຊ້ ຈ່າຍ ທອນ ເປັນເງິນກີບ**